**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງ ແຜນການ ແລະການລົງທຶນ

ເລກທີ 3576/ກຜທ.ກຮມ-ຈສກ-01

ນະຄອນຫຼວງວຽງຈັນ, ວັນທີ 27 ທັນວາ 2023

## <u>ໜັງສືເຊີນ</u>

**ຮຽນ:**...............................................................................................................

................................................................................................................ ທີ່ນັບຖື,

**ເລື່ອງ:** ເຊີນເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບການກະກຽມກອງປະຊຸມໂຕະມົນ ປະຈຳປີ 2023 ແລະ ກອງປະຊຸມປະທານ ແລະປະທານຮ່ວມ ຂອງໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງ ກະຊວງແຜນການ ແລະ ການລົງທຶນສະບັບ ເລກທີ 636/ນຍ, ລົງວັນທີ 26 ພະຈິກ 2021;
- ອີງຕາມ ແຈ້ງການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 2059/ຫສນຍ, ລົງວັນທີ 7 ຕຸລາ 2023;
- ອີງຕາມ ແຜນວຽກຂອງ ຂະບວນການໂຕະມົນ ປະຈຳປີ 2023.

ກະຊວງແຜນການ ແລະການລົງທຶນ ຂໍຖືເປັນກຽດຮຽນເຊີນມາຍັງທ່ານ ເພື່ອເຂົ້າຮ່ວມກອງປະຊຸມປຶກສາຫາລືກ່ຽວກັບການກະກຽມກອງປະຊຸມໂຕະມົນ ປະຈຳປີ 2023 ແລະ ກອງປະຊຸມປະທານ ແລະປະທານຮ່ວມຂອງໜ່ວຍງານຂະແໜງການ ເພື່ອປຶກສາຫາລືກັບຄູ່ຮ່ວມພັດທະນາ. ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອປຶກສາຫາລືກ່ຽວກັບຄວາມຄືບໜ້າໃນການຜັນຂະຫຍາຍຜົນຂອງກອງປະຊຸມໂຕະມົນປະຈຳປີ 2022, ແນວຄວາມຄິດກ່ຽວກັບກອງປະຊຸມໂຕະມົນປະຈຳປີ 2023 ແລະຮ່າງບົດແນະນຳສຳລັບຂະບວນການໂຕະມົນ. ຜົນຂອງກອງປະຊຸມໃນຄັ້ງນີ້ຈະເປັນພື້ນຖານສຳລັບການກະກຽມກອງປະຊຸມໂຕມົນປະຈຳປີ 2023 ທີ່ຈະຈັດຂຶ້ນໃນເດືອນກຸມພາ 2024 ນີ້ ໂດຍສະເພາະແມ່ນແນວຄວາມຄິດ ແລະ ວາລະກອງປະຊຸມ. ກະລຸນາແຈ້ງລາຍຊື່ຜູ້ເຂົ້າຮ່ວມພາຍໃນວັນທີ 10 ມັງກອນ 2024, (ວາລະຂອງກອງປະຊຸມຄັດຕິດມາພ້ອມນີ້).

ວັນທີ, ເດືອນ, ປີ: **16 ມັງກອນ 2024**

ເວລາ: **8:30-12:00 ໂມງ**

ສະຖານທີ່: **ໂຮງແຮມລາວພຣາຊາ**

ດັ່ງນັ້ນ, ຈຶ່ງຂໍຖືເປັນກຽດຮຽນເຊີນມາຍັງທ່ານ ເພື່ອເຂົ້າຮ່ວມກອງປະຊຸມດັ່ງກ່າວດ້ວຍ.

**ຮອງລັດຖະມົນຕີ**

ຄຳຈັນ ວົງແສນບຸນ

**ຕິດຕໍ່:**
**ນາງ. ພັດສະກອນ ເທງົ້າຫຼວງລາດ 020 28030272**
**ທ. ອານຸສິດ ໄຊຍະແສງ ຮອງຫົວໜ້າພະແນກ ຈສກ; ໂທ: 020 55966615**
**ກົມຮ່ວມມືສາກົນ, ກະຊວງ ຜທ.**